สาທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ບົດລາຍງານ
# ແຜນຈັດສັນ ການນຳໃຊ້ທີ່ດິນ ບ້ານ ນາຫຼວງ
# ນະຄອນ ຫຼວງພະບາງ, ແຂວງ ຫຼວງພະບາງ




ກະກຽມໂດຍ:
ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫຼວງພະບາງ
ຂະແໜງ ຊັບພະຍາກອນນ້ຳ ອຸຕຸນິຍົມ ແລະ ອະທິກກະສາດ
2025

# ສາລະບານ


I. ຈຸດປະສົງ ແລະ ລະດັບຄາດໝາຍ ........................................ 1

1. ຈຸດປະສົງ ........................................ 1

2. ລະດັບຄາດໝາຍ ........................................ 1

3. ຂັ້ນຕອນການຈັດຕັ້ງປະຕິບັດ ........................................ 2

II. ສະພາບລວມຂອງບ້ານ ........................................ 2

1. ປະຫວັດຄວາມເປັນມາຂອງບ້ານ ........................................ 2

2. ດ້ານການປົກຄອງ ........................................ 2

3. ກ້ານການຄຸ້ມຄອງ ........................................ 3

4. ສະພາບການນໍາໃຊ້ທີ່ດິນ ........................................ Error! Bookmark not defined.

5. ດ້ານເສດຖະກິດສັງຄົມ ........................................ 5

6. ດ້ານວັດທະນະທໍາຮີດຄອງປະເພນີ ........................................ 5

**ສາລະບານຕາຕະລາງ**


ຕາຕະລາງ 1 ຕິດກັບ ບ້ານ ນາສຳພັນ....3
ຕາຕະລາງ 2 ຕິດກັບ ບ້ານ ຂົ່ວທີ່ 1....3
ຕາຕະລາງ 3 ຕິດກັບບ້ານ ນາສ້າງເຫວີຍ....3
ຕາຕະລາງ 4 ຕິດກັບ ບ້ານ ນາຊາງ....3
ຕາຕະລາງ 5 ຕິດກັບ ບ້ານ ມ້າ....3
ຕາຕະລາງ 6 ປະເພດ ການນຳໃຊ້ທີ່ດິນຂອງບ້ານ....4

**ສາລະບານ ຮູບ**

ຮູບທີ 1 ປະເພດທີ່ດິນ ແຍກຕາມລະຫັດບ້ານ......5
ຮູບທີ່ 2 ການລົງສຳຫຼວດພາກສະໜາມ......6

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ ເລກທີ.........../

## ຂໍ້ຕົກລົງ
## ວ່າດ້ວຍການຮັບຮອງເອົາແຜນການນຳໃຊ້ທີ່ດິນ ແລະ ການປັກຫຼັກໝາຍ
## ຂອງ ບ້ານ ນາຫຼວງ, ນະຄອນຫຼວງພະບາງ

– ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

– ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.

– ອີງຕາມ ໃບສະເໜີຂອງ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງພະບາງ, ສະບັບເລກທີ...........ລົງວັນທີ່....................

### ເຈົ້ານະຄອນຫຼວງພະບາງຕົກລົງ:

**ມາດຕາ 1:** ເຫັນດີຮັບຮອງເອົາແຜນການນຳໃຊ້ທີ່ດິນຂອງບ້ານ ນາຫຼວງ, ນະຄອນຫລວງພະບາງ.

**ມາດຕາ 2:** ມອບໃຫ້ບັນດາຫ້ອງການ, ອົງການປົກຄອງບ້ານ, ກຸ່ມບ້ານ, ບຸກຄົນ, ນິຕິບຸກຄົນ, ປະຊາຊົນ ແລະ ທຸກພາກສ່ວນ ທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຄຸ້ມຄອງນຳໃຊ້ທີ່ດິນ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມ ແຜນຈັດ ສັນທີ່ດິນ ສະບັບນີ້, ທຸກການປ່ຽນແປງປະເພດການນຳໃຊ້ທີ່ດິນ ຈະຕ້ອງໄດ້ຜ່ານການພິຈາລະນາ ຈາກຂະແໜງການທີ່ກ່ຽວຂ້ອງ ແລະ ນຳສະເໜີໃຫ້ຂັ້ນເທິງ ອະນຸຍາດຕາມລະບຽບຫລັກການ.

**ມາດຕາ 3:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້ານະຄອນ ຫຼວງພະບາງ**

ວຽງທອງ ຫັດສະຈັນ
Vlengthong HATSACHANH

**ບ່ອນນຳສົ່ງ**

- ຫ້ອງການ ຊສ ນະຄອນ 1 ສະບັບ;
- ພາກສ່ວນທີ່ກ່ຽວຂ້ອງ 1 ສະບັບ;
- ສຳເນົາ 1 ສະບັບ.

ຫ້ອງວ່າການນະຄອນ ຫຼວງພະບາງ ໜ່ວຍງານຄົ້ນຄວ້າ-ສັງລວມວຽກລັດ 09 ye her
Administrative office Luangprabang city ໂທ Tel/ແຟກFax 071 212160)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງພະບາງ ເລກທີ...........ຫຊສມ

**ໃບສະເໜີ**

ຮຽນ: ທ່ານ ເຈົ້ານະຄອນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ຂໍອະນຸມັດລົງລາຍເຊັນ ໃສ່ຂໍ້ຕົກລົງຮັບຮອງແຜນຈັດສັນທີ່ດິນ ແລະ ການປັກຫຼັກໝາຍ ເຂດແດນບ້ານ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015,
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ

ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນະຄອນຫຼວງພະບາງ ຂໍຖືເປັນກຽດ ເປັນຢ່າງ ສູງຮຽນສະເໜີມາຍັງທ່ານເພື່ອຂໍອະນຸມັດລົງລາຍເຊັນໃສ່ຂໍ້ຕົກລົງ ຮັບຮອງແຜນຈັດສັນທີ່ດິນ ແລະ ການປັກຫຼັກໝາຍເຂດແດນ ຂັ້ນບ້ານຂອງບ້ານ ນາຫຼວງ, ນະຄອນ ຫຼວງພະບາງ.

ດັ່ງນັ້ນ, ຈິ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມເຫັນສົມຄວນດ້

ຫົວໜ້າຫ້ອງການ

ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງພະບາງ

ຫ້ອງການຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນ-ຫຼວງພະບາງ

ສຸພານຸສິດ ອາລຸນ

Mr Souphanousith AROUNE

# ຄຳນຳ

ແຂວງ ຫຼວງພະບາງ ໄດ້ສ້າງແຜນຈັດສັນທີ່ດິນ ແລະ ຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ເພື່ອເປັນບ່ອນອີງໃນການຄຸ້ມຄອງ, ນຳໃຊ້ຊັບພະຍາກອນທຳມະຊາດທີ່ກຳລັງເປັນບັນຫາສຳຄັນ ໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ໃນໄລຍະໃໝ່, ສ້າງໃຫ້ແຂວງມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ຍຸຕິທຳ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ມີພື້ນຖານໃນການຫັນເປັນອຸດສາຫະກຳ-ທັນສະໄໝ, ສະເລ່ຍລາຍໄດ້ຕໍ່ຫົວຄົນ 2.362 ໂດລາ ໃນປີ 2020; ການພັດທະນາສົມດຸນລະຫວ່າງເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ, ສອດຄ່ອງກັບສະພາບຄວາມເປັນຈິງຕາມເງື່ອນໄຂຕົວຈິງ, ທ ່າແຮງທີ່ບົ່ມຊ້ອນຂອງແຂວງ, ລະບົບກົງຈັກການບໍລິຫານ, ການຄຸ້ມຄອງມີຄວາມເຂັ້ມແຂງ,ຊັບພະຍາກອນມະນຸດ ໄດ້ຮັບການພັດທະນາໃຫ້ມີຄຸນນະພາບ, ພຽງພໍ ກັບຄວາມຕ້ອງການໃນການພັດທະນາ,ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງມີປະສິດທິຜົນ.

ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານສະບັບນີ້ເປັນເຄື່ອງມືທາງດ້ານນິຕິກຳທີ່ສຳຄັນທີ່ອຳນວຍຄວາມສະດວກໃຫ້ແກ່ການຕັດສິນໃຈໃນການພັດທະນາໃຫ້ໄວຂຶ້ນໂດຍສະເພາະການພິຈາລະນາປັດໃຈທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມເພື່ອກຳນົດແຜນການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ສອດຄ່ອງກັບແຜນແມ່ບົດການຈັດສັນທີ່ດິນແຫ່ງຊາດ, ຄຸ້ມຄອງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ຕາມລະບຽບກົດໝາຍ, ນຳໃຊ້ຊັບພະຍາກອນທີ່ມີ ເພື່ອສ້າງຜົນປະໂຫຍດສູງສຸດໃຫ້ແກ່ທ້ອງຖິ່ນ. ໃນການ ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງຈະແຈ້ງ ເປັນຕົ້ນແມ່ນເຂດທີ່ຢູ່ອາໄສ, ເຂດກະສິກຳ, ເຂດອຸດສາຫະກຳ ແລະ ເຂດອື່ນໆ... ໂດຍໄດ້ກຳນົດຫຼັກການ ແລະ ມາດຕະການ ໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ພ້ອມທັງມີມາດຕະການໃນການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງແຕ່ລະຂົງເຂດວຽກງານ.

ສະນັ້ນ, ເພື່ອຈັດຕັ້ງປະຕິບັດບັນດາວິໄສທັດ ຍຸດທະສາດໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງຫຼວງພະບາງແຕ່ລະໄລຍະໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຈຸດສຸມ, ມີຄວາມໝັ້ນຄົງ, ມີຄວາມຍືນຍົງແມ່ນມີຄວາມຈຳເປັນຕ້ອງໄດ້ນຳໃຊ້ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ສະບັບນີ້ ເປັນທິດທາງ, ນະໂຍບາຍອັນສຳຄັນເຂົ້າໃນການພັດທະນາໃນແຕ່ລະດ້ານ.

# ສັງລວມຫຍໍ້

ບ້ານ ນາຫຼວງ ແມ່ນບ້ານໜຶ່ງທີ່ຂຶ້ນກັບກຸ່ມ ມະໂນ ເຊິ່ງຕັ້ງຢູ່ໃນເທດສະບານນະຄອນ ຫຼວງພະບາງມີເຂດແດນ ຕິດກັບ 5 ບ້ານ ຄື: ທິດເໜືອ ຕິດກັບ ບ້ານ ນາສຳພັນ, ທິດໃຕ້ ຕິດກັບ ບ້ານ ຂົວທີ່ 1, ທິດຕາເວັນອອກ ຕິດກັບ ບ້ານ ນາສ້າງເຫວີຍ ແລະ ທິດຕາເວັນຕົກ ຕິດກັບ ບ້ານ ນາຊາງ ແລະ ບ້ານ ມ້າ.

ບ້ານ ນາຫຼວງ ແມ່ນເປັນ ບ້ານພັດທະນາເສດຖະກິດແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນເປັນຕົ້ນແມ່ນຈັດເປັນກຸ່ມການຜະລິດ, ກຸ່ມການຄ້າ, ກຸ່ມການບໍລິການ ຕິດພັນກັບການທ່ອງທ່ຽວ ກຸ່ມກຳມະກອນ ແລະ ອື່ນໆ ປີ 2019 ສາມາດສ້າງລາຍຮັບໄດ້ທັງໝົດ 48,240,500,000 ກີບ ຕໍ່ປີ, ສະເລ່ຍໃສ່ຫົວຄົນຜູ້ໜຶ່ງໄດ້16,150,000 ກີບ ( ສິບຫົກລ້ານໜຶ່ງແສນຫ້າສິບພັນກີບ ). ຕໍ່ຄົນຕໍ່ປີ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 2 % ມີຄອບຄົວຕົວ ແບບທັງໝົດ 10ຄອບຄົວ

ການນຳໃຊ້ທີ່ດິນ ຢູ່ບ້ານ ນາຫຼວງ ແມ່ນ ແບ່ງອອກເປັນ 6 ປະເພດ ຄື:ປະເພດທີ່ດິນ ກະສິກຳ ແມ່ນມີເນື້ອທີ່ ທັງໝົດແມ່ນ 4,59 ເຮັກຕາ. ປະກອບມີ 2 ປະເພດຄື: ດິນນາ 1,77 ເຮັດຕ່າກວມເອົາ 0,79 % ແລະ ທີ່ດິນ ປູກພືດກະສິກຳ 2,82 ເຮັກຕ່າ ກວມເອົາ 1,26 %, ປະເພດທີ່ດິນ ປຸກສ້າງ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 46,76 ເຮັກຕາ. ປະກອບມີ 2 ປະເພດຄື: ທີ່ດິນປຸກສ້າງສ່ວນບຸກຄົນ 39,47 ເຮັດຕ່າ, ກວມເອົາ 17,65 % ແລະ ທີ່ດິນປຸກສ້າງຂອງລັດ 7.29 ເຮັກຕ່າ ກວມເອົາ 3.26 %, ປະເພດທີ່ດິນ ວັດທະນະທຳ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 3,17 ເຮັກຕາ. ປະກອບມີ 2 ປະເພດຄື: ທີ່ດິນວັດ 0,24 ເຮັດຕ່າ, ກວມເອົາ 0,11 % ແລະ ທີ່ດິນປ່າຊ້າ 2,93 ເຮັກຕ່າ ກວມເອົາ 1,31 %, ປະເພດທີ່ດິນ ປ່າໄມ້ ແມ່ນມີເນື້ອທີ່ ທັງໝົດແມ່ນ 162,61 ເຮັກຕາ. ປະກອບມີ 2 ປະເພດຄື: ທີ່ດິນປ່າສະຫງວນ 60,31 ເຮັດຕ່າ, ກວມເອົາ 26,96 % ແລະ ທີ່ດິນປູກໄມ້ອຸດສາຫະກຳ 102,3 ເຮັກຕ່າ ກວມເອົາ 45,75 %, ປະເພດທີ່ດິນ ໂຍທາ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 5,05 ເຮັກຕາ, ປະກອບມີ 2 ປະເພດຄື: ທີ່ດິນທາງປູຢາງ ມີເນື້ອທີ່ 3,2 ເຮັກຕາ, ກວມເອົາ 1,43% ແລະ ທີ່ດິນທາງດິນແດງ 1,85 ເຮັກຕາ , ກວມເອົາ 0,83% ແລະ ປະເພດ ທີ່ດິນບໍລິເວນນໍ້າ ແມ່ນ ມີແຕ່ປະເພດດຽວ ເປັນດິນໜອງນໍ້າ ມີເນື້ອທີ່ 1,45 ເຮັກຕ່າ, ກວມເອົາ 0,65%.

## I. ຈຸດປະສົງ ແລະ ລະດັບຄາດໝາຍ

### 1) ຈຸດປະສົງ

ນະຄອນຫຼວງພະບາງ ຖືວ່າເປັນສູນກາງການຂົນສົ່ງ ແລະ ການທ່ອງທ່ຽວທີ່ສຳຄັນທາງພາກເໜືອຂອງ ສປປ ລາວ ທີ່ມີການຂະຫຍາຍຕົວໄວ ຊຶ່ງມີທີ່ຕັ້ງຢູ່ລະຫວ່າງຈຸດທີ່ເຊື່ອມຕໍ່ຂອງແມ່ນ້ຳຂອງ ແລະ ສາຍນ້ຳຄານ. ພື້ນທີ່ບໍລິເວນທາງດ້ານປະຫວັດສາດ ແລະ ພູມສັນຖານອ້ອມຮອບທີ່ສຳຄັນຂອງນະຄອນດັ່ງກ່າວ ໄດ້ຖືກບັນທຶກໄວ້ໃນເອກະສານທາງດ້ານມໍລະດົກໂລກຂອງອົງການສະຫະປະຊາຊາດເພື່ອ ການສຶກສາ ວິທະຍາສາດ ແລະ ວັດທະນະທຳ (ຫຼື ອົງການ UNESCO) ໃນປີ 1995

ນະຄອນຫຼວງພະບາງ, ກໍເປັນເມືອງໜຶ່ງທີ່ນອນໃນເປົ້າໝາຍຂອງໂຄງການຄຸ້ມຄອງຊັບພະຍາກອນ ນ້ຳແບບເຊື່ອມສານ ແລະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໂດຍອີງໃສ່ທ່າແຮງຂອງລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຼຽງ ແລະ ຕົວເມືອງຫຼວງພະບາງ. ນະຄອນຄອນຫຼວງພະບາງຕັ້ງຢູ່ຈຸດໃຈກາງຂອງແຂວງຫຼວງພະບາງ, ມີພົນລະເມືອງທັງໝົດ 96.755 ຄົນ, ຍິງ 48.055 ຄົນ, ມີທັງໝົດ 17.480 ຄອບຄົວ, ມີຈຳນວນ 115 ບ້ານ, ໃນນັ້ນ 65 ບ້ານແມ່ນນອນຢູ່ໃນເຂດສະບານແລະ 50 ບ້ານຢູ່ນອກເຂດສະບານ; ໂດຍໄດ້ກຳນົດເປັນ 15 ກຸ່ມບ້ານ, ມີ 9 ກຸ່ມໃນເຂດສະບານແລະ 6 ກຸ່ມນອກເຂດສະບານ, ປະຊາຊົນສ່ວນຫຼາຍຖືເອົາອາຊີບການບໍລິການ, ການປຸງແຕ່ງ, ການຄ້າຂາຍແລະຜະລິດກະສິກຳເປັນຕົ້ນຕໍ,ອັດຕາການເພີ່ມຂຶ້ນຂອງປະຊາກອນນະຄອນຫຼວງພະບາງສະເລ່ຍ 1,1 %

ສະພາບດິນຟ້າອາກາດມີອຸນຫະພູມສະເລ່ຍສູງສຸດ 35,1 ອົງສາແລະຕ່ຳສຸດສະເລ່ຍ 16,5 ອົງສາ, ປະລິມານນ້ຳຝົນໃນລະດັບສະເລ່ຍ 248,9 ມລ/ປີ, ລະດັບຄວາມສູງສະເລ່ຍ 247 ແມັດເຖິງ 1.425 ແມັດ (ທຽບໃສ່ລະດັບໜ້ານ້ຳທະເລ); ໃນແຕ່ລະປີມັກເກີດມີໄພພິບັດຈາກທຳມະຊາດຈຳນວນບໍ່ໜ້ອຍໂດຍສະເພາະແມ່ນລົມພະຍຸລະດູຮ້ອນ, ຝົນຕົກແຮງມີດິນເຊາະເຈື່ອນ, ນ້ຳໄຫຼສຸ, ນ້ຳຖ້ວມ, ຖະໜົນຫົນທາງເປ່ເພແລະອັກຄີໄພໄຟໄໝ້ອື່ນໆ, ເຮັດໃຫ້ມີຜົນກະທົບຕໍ່ ເຮືອນຊານບ້ານຊ່ອງ, ທີ່ຢູ່ອາໄສ, ຜົນຜະລິດກະສິກຳ, ການສັນຈອນ, ຍິ່ງກວ່ານັ້ນຈົນເຖິງຂັ້ນຄົນເຮົາເສຍຊີວິດ; ສະເລ່ຍເປັນມູນຄ່າເສຍຫາຍ 64.007.000 ກີບ.

ຈຸດປະສົງຂອງການສຳຫຼວດວາງແຜນຈັດສັນ ແລະ ການນຳໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສຳຄັນໃນລະບົບການຄຸ້ມຄອງ , ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ທັງນີ້ກໍ່ເພື່ອເຮັດໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນຳໃຊ້ທີ່ດິນໃຫ້ມີການປະສົມປະສານຢ່າງກົມກຽວ ສອດຄ່ອງກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະເຂດ. ດັ່ງນັ້ນ, ຈຸດປະສົງຂອງການວາງແຜນສຳຫຼວດຈັດສັນທີ່ດິນຕ້ອງໄດ້ເລັ່ງໃສ່ໃນຂົງເຂດວຽກງານຫຼັກລຸ່ມນີ້:

1. ສຳຫຼວດ ປະເພດການນຳໃຊ່ທີ່ດິນ ຂອງບ້ານ ຕາມ 8 ປະເພດ ການນຳໃຊ້ທີ່ດິນ
2. ສຳຫຼວດ ຂອບເຂດແດນບ້ານ ເພື່ອປັກຫຼັກໝາຍ ຂອບເຂດການປົກຄອງຂອງບ້ານ
3. ສ້າງແຜນທີ່ ການຈັດສັນທີດິນ ແລະ ປັກຫຼັກໝາຍເຂດແດນບ້ານ

### 2) ລະດັບຄາດໝາຍ

1. ເຮັດໃຫ້ ບ້ານ ນາຫຼວງ ມີແຜນຈັດສັນທີ່ດິນ ແລະ ແຜນທີ່ຂອບເຂດການປົກຄອງຂອງບ້ານ ທີ່ຖືກຮັບຮອງຢ່າງເປັນທາງການ ໂດຍທ່ານເຈົ້ານະຄອນຫຼວງພະບາງ ຜ່ານຄວາມເປັນເອກະພາບຈາກບັນດາຂະແໜງການກ່ຽວຂ້ອງຂັ້ນນະຄອນ ແລະ ອົງການປົກຄອງບ້ານ ຊຶ່ງມີການເຂົ້າຮ່ວມຂອງປະຊາຊົນພາຍໃນບ້ານ.

2. ແຜນທີ່ຈັດສັນ ແລະ ພັດທະນາທີ່ດິນຂອງບ້ານ ນາຫຼວງ ໄດ້ຖືກພິມໃສ່ແຜ່ນໂຄສະນາ ແລະ ຖືກປັກໄວ້ຢູ່ບ້ານ ເພື່ອໃຫ້ ສາມາດເຫັນໄດ້ຢ່າງຈະແຈ້ງ.

3) **ຂັ້ນຕອນການຈັດຕັ້ງປະຕິບັດ**

- **ຂັ້ນຕອນທີ່ 1 ຂັ້ນຕອນການກະກຽມ**
  - ກະກຽມ ບັນດາເອກະສານນິຕິກຳຕ່າງໆທີ່ກ່ຽວຂ້ອງກັບການຈັດສັນທີ່ດິນ ເພື່ອກຳນົດຈຸດໃນການປັກຫຼັກໝາຍເຂດແດນຂອງບ້ານ.
  - ລົງເຜີຍແຜ່ ແລະ ເປີດກອງປະຊຸມປຶກສາຫາລື ຄວາມເປັນເອກະພາບ ໃນການລົງຈັດຕັ້ງປະຕິບັດ ໃນຄັ້ງວັນທີ 9 / 12 / 2024.
  - ລົງພາກສະໜາມຕົວຈິງເພື່ອສຳຫຼວດຈຸດທີ່ໄດ້ກຳນົດໄວ້
- **ບາດກ້າວທີ 2:ການສ້າງແຜນຈັດສັນທີ່ດິນ**
  - ນຳຂໍ້ມູນທີ່ໄດ້ຈາກການລົງສະໜາມຕົວຈິງເຂົ້າໃນແຜນທີ່
  - ສ້າງແຜນທີ່ ການນຳໃຊ້ທີ່ດິນໃນປະຈຸບັນ
- **ບາດກ້າວທີ່ 3: ສະເໜີຜ່ານຮ່າງແຜນຈັດສັນທີ່ດິນ**
  - ສະເໜີ ຮ່າງແຜນຈັດສັນທີ່ດິນ ແລະ ການນຳນົດຈຸດປັກຫຼັກໝາຍເຂດແດນບ້ານ
  - ປັບປຸງ ແຜນຈັດສັນຕາມການສະເໜີ ຂອງບັນດາຄະນະກຳມະການ ແລະ ອຳນາດການປົກຄອງບ້ານ
- **ບາດກ້າວທີ່ 4: ຮັບຮອງແຜນຈັດສັນທີ່ດິນ**
  - ຮັບຮອງແຜນຈັດສັນທີ່ດິນທີ່ໄດ້ຮັບການປັບປຸງ ໄປຕາມແຕ່ລະຂັ້ນຕອນ

## II. ສະພາບລວມຂອງບ້ານ

1. ປະຫວັດຄວາມເປັນມາຂອງບ້ານ

ບ້ານ ນາຫຼວງ ແມ່ນບ້ານໜຶ່ງທີ່ຂຶ້ນກັບກຸ່ມ ມະໂນ ເຊິ່ງຕັ້ງຢູ່ໃນເທດສະບານນະຄອນ ຫຼວງພະບາງ, ມີເນື້ອທີ່ ລວມທັງ 223,63 ເຮັກຕາ, ບ້ານນາຫຼວງເຊິ່ງປະກອບມີ 402 ຄອບຄົວມີ 430 ຫຼັງຄາ ພົນລະເມືອງທັງໝົດ 2288 ຄົນ ຍິງ 1,162 ຄົນ ມີ 29 ໜ່ວຍຄຸ້ມຄອງມີ 3 ຊົນເຜົ່າໃຫ່ຍ.ເຜົ່າລາວລຸ່ມມີ 350 ຄອບຄົວ ພົນລະເມືອງມີ 1970 ຄົນ ຍິງ 1003 ຄົນ, ເຜົ່າກຶມມຸມີ 40 ຄອບຄົວ ພົນລະເມືອງມີ 763 ຄົນ ຍິງ 248 ຄົນ, ເຜົ່າມົ້ງມີ 11 ຄອບຄົວ ພົນລະເມືອງ 69 ຄົນ ຍິງ 34 ຄົນ

2. ດ້ານການປົກຄອງ

ວຽກງານອົງການປົກຄອງ ແມ່ນວຽກງານໜຶ່ງ ທີ່ສຳຄັນ ໃນການບໍລິຫານລັດໃນຂັ້ນບ້ານ ມີຄວາມຮັບຜິດຊອບຕໍ່ນະຄອນຫຼວງພະບາງ ການເຕົ້າໂຮມຄວາມສາມັກຄີ ເປັນເອກະພາບໃນທຸກຂົງເຂດວຽກງານ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ນຳພາເປັນໝູ່ຄະນະ ໄດ້ແບ່ງວຽກໃຫ້ສະມາຊິກພັກ ແຕ່ລະສະຫາຍຮັບຜິດຊອບຢູ່ບັນດາຂະແໜງ ການ ເພື່ອສະດວກໃນການນຳພາວຽກງານ ຮອບດ້ານ.ນຳພາພໍ່ແມ່ປະຊາຊົນພາຍໃນບ້ານ ສ້າງຂະບວນການປູກຕົ້ນໄມ້ ປະດັບຕົ້ນຝາງແດງຈຳນວນ 150 ຕົ້ນ ປູກຕາມທາງໄປສະຖານີລົດໄຟເພື່ອເປັນການປະກອບສ່ວນຊ່ວຍນະຄອນ.ມີຄະນະບ້ານ 5 ສະຫາຍ, ຍິງ 2 ສະຫາຍ, ໄດ້ແບ່ງໃຫ້ບັນດາສະຫາຍຮັບຜິດຊອບ ຕາມ 5 ໜ່ວຍງານການຄຸ້ມຄອງຂອງບ້ານ ຕິລາຄາຈັດປະເພດ ແຂງ 5 ສະຫາຍ, ຍິງ 2 ສະຫາຍ.

3. ກ້ານການຄຸ້ມຄອງ

ບ້ານ ນາຫຼວງ ແມ່ນບ້ານໜຶ່ງທີ່ຂຶ້ນກັບກຸ່ມ ມະໂນ ເຊິ່ງຕັ້ງຢູ່ໃນເທດສະບານນະຄອນ ຫຼວງພະບາງມີເຂດແດນ ຕິດກັບ 6 ບ້ານ ຄື: ທິດເໜືອ ຕິດກັບ ບ້ານ ນາສຳພັນ, ທິດໃຕ້ ຕິດກັບ ບ້ານ ຂົ່ວທີ່ 1, ທິດຕາເວັນອອກ ຕິດກັບ ບ້ານ ນາສ້າງເຫວີຍ ແລະ ທິດຕາເວັນຕົກ ຕິດກັບ ບ້ານ ນາຊາງ ແລະ ບ້ານ ມ້າ

❖ ທິດເໜືອ ຕິດກັບ ບ້ານ ນາສຳພັນ

ຕາຕະລາງ 1 ຕິດກັບ ບ້ານ ນາສຳພັນ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 200127 | 2199764 | ກ້ອງເຮືອນພັກແກ້ວມີຊົມ |
| 2 | 199769 | 2199796 | ແຈຮ້ານເບສໂຕ |

❖ ທິດໃຕ້ຕິດກັບ ບ້ານ ຂົ່ວທີ່ 1

ຕາຕະລາງ 2 ຕິດກັບ ບ້ານ ຂົ່ວທີ່ 1

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 199293 | 2198934 | ໜ້າ ກາລາລິດ |

❖ ທິດຕາເວັນອອກ ຕິດກັບ ບ້ານ ນາສ້າງເຫວີຍ

ຕາຕະລາງ 3 ຕິດກັບບ້ານ ນາສ້າງເຫວີຍ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 200398 | 2199903 | ຮ່ອງນໍ້າກະລາລິດ |
| 2 | 200471 | 2199992 | ໜ້າຮ່ອງນໍ້າທາງຮ່ອມ |
| 3 | 200490 | 2200146 | ຮ່ອງນໍ້າທາງຮ່ອມ |

❖ ທິດຕາເວັນຕົກຕິດກັບ ບ້ານ ນາຊາງ ແລະ ບ້ານ ມ້າ

ຕາຕະລາງ 4 ຕິດກັບ ບ້ານ ນາຊາງ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 199410 | 2199677 | ຮ້ານຂາຍປາທູ |
| 2 | 199428 | 2199815 | ແຈກຳແພງຂອງໂຮງແຮມວິວຫຼວງພະບາງ |

ຕາຕະລາງ 5 ຕິດກັບ ບ້ານ ມ້າ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 199297 | 2199003 | ຫົວພູນາດູ |
| 2 | 199319 | 2199197 | ໜ້າສາງຜະລິດຫົວອາຫານ |

4. ສະພາບການນຳໃຊ້ທີ່ດິນ

ບ້ານ ນາຫຼວງ ເປັນບ້ານໜຶ່ງທີ່ນອນຢູ່ໃນ ຈຳນວນບ້ານ ຂອງ ນະຄອນຫຼວງພະບາງ, ການນຳໃຊ້ທີ່ດິນກວມສ່ວນຫຼາຍແມ່ນ ທີ່ດິນປຸກສ້າງ ກວມເອົາ 46,76 % ຂອງເນື້ອທີ່ດິນທັງໝົດ, ນອກຈາກນີ້ຍັງມີທີ່ດິນກະສິກຳ, ທີ່ດິນວັດທະນະທຳ, ທີ່ດິນປ່າໄມ້, ທີ່ດິນໂຍທາທິການ ແລະ ທີ່ດິນບໍລິເວນນ້ຳ ເຊິ່ງມີລາຍລະອຽດດັ່ງນີ້:

❖ ປະເພດທີ່ ກະສິກຳ

ປະເພດທີ່ດິນ ກະສິກຳ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 4,59 ເຮັກຕາ. ປະກອບມີ 2 ປະເພດຄື: ດິນນາ 1,77 ເຮັດຕ່າ ກວມເອົາ 0,79 % ແລະ ທີ່ດິນ ປູກພືດກະສິກຳ 2,82 ເຮັກຕ່າ ກວມເອົາ 1,26 %

❖ ປະເພດທີ່ດິນປຸກສ້າງ

ປະເພດທີ່ດິນ ປຸກສ້າງ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 46,76 ເຮັກຕາ. ປະກອບມີ 2 ປະເພດຄື: ທີ່ດິນປຸກສ້າງສ່ວນບຸກຄົນ 39,47 ເຮັດຕ່າ, ກວມເອົາ 17,65 % ແລະ ທີ່ດິນປຸກສ້າງຂອງລັດ 7.29 ເຮັກຕ່າ ກວມເອົາ 3.26 %

❖ ປະເພດທີ່ດິນວັດທະນະທຳ

ປະເພດທີ່ດິນ ວັດທະນະທຳ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 3,17 ເຮັກຕາ. ປະກອບມີ 2 ປະເພດຄື: ທີ່ດິນວັດ 0,24 ເຮັດຕ່າ, ກວມເອົາ 0,11 % ແລະ ທີ່ດິນປ່າຊ້າ 2,93 ເຮັກຕ່າ ກວມເອົາ 1,31 %

❖ ປະເພດທີ່ດິນປ່າໄມ້

ປະເພດທີ່ດິນ ປ່າໄມ້ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 162,61 ເຮັກຕາ. ປະກອບມີ 2 ປະເພດຄື: ທີ່ດິນປ່າສະຫງວນ 60,31 ເຮັດຕ່າ, ກວມເອົາ 26,96 % ແລະ ທີ່ດິນປູກໄມ້ອຸດສາຫະກຳ 102,3 ເຮັກຕ່າ ກວມເອົາ 45,75 %

.ປະເພດທີ່ດິນໂຍທາ

ປະເພດທີ່ດິນ ໂຍທາ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 5,05 ເຮັກຕາ, ປະກອບມີ 2 ປະເພດຄື: ທີ່ດິນທາງປູຢາງ ມີເນື້ອທີ່ 3,2 ເຮັກຕາ, ກວມເອົາ 1,43% ແລະ ທີ່ດິນທາງດິນແດງ 1,85 ເຮັກຕາ, ກວມເອົາ 0,83%

❖ ປະເພດທີ່ດິນບໍລິເວນນ້ຳ

ປະເພດ ທີ່ດິນບໍລິເວນນ້ຳ ແມ່ນ ມີແຕ່ປະເພດດຽວ ເປັນດິນໜອງນ້ຳ ມີເນື້ອທີ່ 1,45 ເຮັກຕ່າ, ກວມເອົາ 0,65%

ຕາຕະລາງ 6 ປະເພດ ການນຳໃຊ້ທີ່ດິນຂອງບ້ານ:

| ລ/ດ | ປະເພດດິນ | ລະຫັດ | ເນື້ອທີ່ | ເປີເຊັນ (%) |
|---|---|---|---|---|
| I | **ທີ່ດິນກະສິກຳ** | **AZ** | **4.59** | **2.05** |
| 1 | ດິນນາ | AZ_1 | 1.77 | 0.79 |
| 2 | ປູກພືດກະສິກຳທົ່ວໄປ | AZ_2 | 2.82 | 1.26 |
| II | **ທີ່ດິນປຸກສ້າງ** | **BZ** | **46.76** | **20.91** |
| 1 | ດິນປຸກສ້າງສ່ວນບຸກຄົນ | BZ_1 | 39.47 | 17.65 |
| 2 | ທີ່ດິນແປຸກສ້າງຂອງລັດ | BZ_2 | 7.29 | 3.26 |
| III | **ທີ່ດິນວັດທະນະທຳ** | **CZ** | **3.17** | **1.42** |
| 1 | ທີ່ດິນວັດທະນະທຳ | CZ_1 | 0.24 | 0.11 |
| 2 | ປ່າຊ້າ | CZ_2 | 2.93 | 1.31 |

| | | | | |
|---|---|---|---|---|
| IV | ທີ່ດິນປ່າໄມ້ | FZ | 162.61 | 72.71 |
| 1 | ທີ່ດິນປ່າສະຫງວນ | FZ_2 | 60.31 | 26.96 |
| 2 | ທີ່ດິນປູກໄມ້ອຸດສາຫະກຳ | FZ_5 | 102.3 | 45.75 |
| V | ທີ່ດິນໂຍທາ | RZ | 5.05 | 2.25 |
| 1 | ທາງປູຢາງ | RZ_1 | 3.2 | 1.43 |
| 2 | ທາງດິນແດງ | RZ_2 | 1.85 | 0.83 |
| VI | ທີ່ດິນບໍລິເວນນ້ຳ | WZ | 1.45 | 0.65 |
| 1 | ໜອງນ້ຳ | WZ_4 | 1.45 | 0.65 |

5. **ດ້ານເສດຖະກິດສັງຄົມ**

ບ້ານ ນາຫຼວງ ແມ່ນເປັນ ບ້ານພັດທະນາເສດຖະກິດແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນເປັນຕົ້ນແມ່ນຈັດເປັນກຸ່ມການຜະລິດ, ກຸ່ມການຄ້າ, ກຸ່ມການບໍລິການ ຕິດພັນກັບການທ່ອງທ່ຽວ ກຸ່ມກຳມະກອນ ແລະ ອື່ນໆ ປີ 2019 ສາມາດສ້າງລາຍຮັບໄດ້ທັງໝົດ 48,240,500,000 ກີບ ຕໍ່ປີ, ສະເລ່ຍໃສ່ຫົວຄົນຜູ້ໜຶ່ງໄດ້16,150,000 ກີບ ( ສິບຫົກລ້ານໜຶ່ງແສນຫ້າສິບພັນກີບ ). ຕໍ່ຄົນຕໍ່ປີ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 2 % ມີຄອບຄົວຕົວ ແບບທັງໝົດ 10ຄອບຄົວຄື:

1) ຄອບຄົວ ທ່ານ ພູເພັດ ທອມສົມບັດ. ( ບໍລິສັດກໍ່ສ້າງ )
2) ຄອບຄົວ ທ່ານ ນາງ ແສງຈັນ ວົງວອນ. ( ບໍລິສັດລົດຕູ້ໃຫ້ເຊົ່າ )
3) ຄອບຄົວ ທ່ານ ຫຼ້າ ຫຼອງໃບ. ( ການກະເສດ )
4) ຄອບຄົວ ທ່ານ ນາງ ບົວຈັນ ແກ້ວມະນີ ( ສວນຢາງພາລາ )
5) ຄອບຄົວ ທ່ານ ເກົ່າ ນ່າມ ແຊ່ລີ່ ( ສ້ອມແປງລົດ )
6) ຄອບຄົວ ທ່ານ ຈັນທີ ກົດຕິວົງ. ( ບໍລິສັດໄຟຟ້າເອກະຊົນ )
7) ຄອບຄົວ ທ່ານ ແສງອາລຸນ ວັນທານຸວົງ ( ຄ້າຂາຍ )
8) ຄອບຄົວ ທ່ານ ສຸລິເດດ ມີໄຊສຸກ. ( ສ້ອມແປງ )
9) ຄອບຄົວ ທ່ານ ນາງ ແສງຈັນ ສິດທິວັນ. ( ຕົວແທນຈຳໜ່າຍສິນຄ້າ )
10) ຄອບຄົວ ທ່ານ ປ້ອມ ພົມມະຈັນ. ( ໂຮງງານຜະລິດປະຕູມ້ວນ ).

6. **ດ້ານວັດທະນະທຳຮີດຄອງປະເພນີ**

ໃນຊຸມປີຜ່ານມາໜ່ວຍພັກໄດ້ນຳພາປະຊາຊົນພາຍໃນບ້ານ ໃນການຈັດຕັ້ງປະຕິບັດຕາມຮີດຄອງປະເພນີດີງາມ ຂອງຊາວນະຄອນຫຼວງພະບາງ ໂດຍສະເພາະແມ່ນນຳພາເຮັດບຸນມະຫາຊາດຢູ່ວັດບ້ານນາຫຼວງ ບຸນປີໃໝ່ເຂົ້າປະດັບດິນ ເຮັດເຮືອໄຟເຂົ້າຮ່ວມຂະບວນໄຫຼເຮືອໄຟຂອງນະຄອນຫຼວງພະບາງ, ສ້າງຄອບຄົວວັດທະນະທຳຄອບຄົວ ເທົ່າກັບ 100% ຂອງຈຳນວນຄອບຄົວທັງໝົດພາຍໃນບ້ານ ບ້ານມີວັດ 2 ແຫ່ງ ມີພະສົງ 8 ອົງ ມີສຳມະເນນ 52 ຕົນ ປະຊາຊົນພາຍໃນບ້ານນັບຖືສາດສະໜາພຸດງ

7. **ດ້ານວຽກງານວັດທະນະທຳ - ສັງຄົມ**

ມີໂຮງຮຽນ ໝວດປະຖົມ ແລະ ມັດຖະຍົມຕົ້ນ ມີຄູອາຈານ 23 ຄົນ ຍິງ 16 ຄົນ ມີນັກຮຽນ 520 ຄົນ ຍິງ 384ຄົນ. ເດັກເກນອາຍຸພາຍໃນບ້ານໄດ້ເຂົ້າໂຮງຮຽນ 100%, ບໍ່ມີນັກຮຽນປະລະການຮຽນ. ລະດົມທຶນເພື່ອບູລະນະຮັກສາສ້ອມແປງ

ທາງໂຮງຮຽນຕາມແຜນການຂອງໂຮງຮຽນວາງອອກປົກປັກຮັກສາໃຫ້ ຊົມໃຊ້ໄດ້ຍາວນານ ສະເລ່ຍເປັນມູນຄ່າ 17,200,000 ກີບ ( ສິບເຈັດລ້ານສອງແສນກີບ )

8. ດ້ານວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ

ຮັກສາ ຄວາມເປັນ ລະບຽບຮຽບຮ້ອຍຢູ່ພາຍໃນບ້ານໄດ້ເຄື່ອນໄຫວຕາມພາລະບົດບາດຂອງຕົນ, ໃນການປະຕິວັດວຽກງານປ້ອງກັນວຽກງານປ້ອງກັນ ກອງຫຼອນ ເປັນວຽກງານທີ່ສຳຄັນ ໃນການປ້ອງກັນຄວາມສະຫງົບພາຍໃນ, ຄວາມເປັນ ແລະ ບຸນປະເພນີຕ່າງໆພາຍໃນບ້ານ 7 ຄັ້ງ ມີແຮງງານ ທັງໝົດ 240 ແຮງງານມີຄະດີເກີດເວນຍາມວັນສຳຄັນຂອງຊາດຂຶ້ນ 3 ເລື່ອງ ສາມາດແກ້ໄຂໄດ້ 3 ເລື່ອງ.ລົງກວດກາຄົນພັກເຊົາຢູ່ພາຍໃນບ້ານ 4 ຄັ້ງ ຈຳນວນພົນ 127 ຄົນ, ຍິງ 74 ຄົນ.ບ້ານນາຫຼວງມີສະມາຊິກປ້ອງກັນກອງຫຼອນທັງໝົດ 37 ສະຫາຍ ຕີລາຄາຈັດປະເພດແຂງ 37 ສະຫາຍຈັດເປັນໜ່ວຍປ້ອງກັນ ແລະ ກອງຫຼອນປະເພດແຂງ.




ຮູບທີ 1: ປະເພດທີ່ດິນ ແຍກຕາມລະຫັດບ້ານ




ຮູບທີ 2: ຮູບພາບ ການລົງພາກສະໜາມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ ເລກທີ.....21...../

## ບົດບັນທຶກ

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ນາຫຼວງ ແລະ ນາສ້າງເຫວີຍ

– ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

– ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.

– ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ **ບ້ານ ນາສຳພັນ ແລະ ບ້ານ ນາສ້າງເຫວີຍ** ຄັ້ງວັນທີ 16 / 12 /2024.

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນນານ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໄດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ.:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານ ດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 200398 | 2199903 | ຮ່ອງນ້ຳກະລາລົດ |
| 2 | 200471 | 2199992 | ໜ້າຮ່ອງນ້ຳ ທາງຮ່ອມ |
| 3 | 200490 | 2200146 | ຮ່ອງນ້ຳທາງຮ່ອມ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ........................ ພະຍານ ບ້ານ.......................................

ຄຳມູນ ພູວິໄລ
Khammoon PHOUVILAY

2. ນາຍບ້ານ ບ້ານ........................ ພະຍານ ບ້ານ.......................................

ວຽງເພັກ ອຳພອນ

ເຈົ້ານະຄອນຫຼວງພະບາງ | ຫົວໜ້າ ຫ້ອງການພາຍໃນ | ຫົວໜ້າ ຫ້ອງການ ຊສ ນະຄອນ

ວຽງທອງ ຫັດສະຈັນ
Viengthong HATSACHANH

ນ. ແສງທອງ ລາທິພົງ

ສຸພານຸສິດ ອາລຸນ
Mr Souphanousith AROUNE

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ ເລກທີ.21......./

**ບົດບັນທຶກ**

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ນາຫຼວງ ແລະ ບ້ານ ມ້າ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.
- ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ **ບ້ານ ນາສຳພັນ ແລະ ບ້ານ ນາສ້າງເຫວີຍ** ຄັ້ງວັນທີ 16 / 12 /2024.

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນນານ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໃດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 199297 | 2199003 | ຫົວພູນາດູ |
| 2 | 199319 | 2199197 | ໜ້າສາງຜະລິດຫົວອາຫານ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ...................... ຄຳມູນ ພູວິໄລ Khammoon PHOUVILAY ພະຍານ ບ້ານ.......................................

2. ນາຍບ້ານ ບ້ານ...................... ນ. ຈັນມະລີ ຈັນສີນາ ພະຍານ ບ້ານ.......................................

ເຈົ້ານະຄອນຫຼວງພະບາງ ຫົວໜ້າ ຫ້ອງການພາຍໃນ ຫົວໜ້າ ຫ້ອງການ ຊສ ນະຄອນ

ວຽງທອງ ຫັດສະຈັນ Viengthong HATSACHANH

ນ. ແສງທອງ ລາທິພົງ

ສຸພານຸສິດ ອາລຸນ Mr Souphanousith AROUNE

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ　　　　　　　　　　　　　　　　　　ເລກທີ...21......./

## ບົດບັນທຶກ

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ນາຫຼວງ ແລະ ບ້ານ ນາຊາງ

– ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

– ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.

– ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ **ບ້ານ ນາສຳພັນ ແລະ ບ້ານ ນາສ້າງເຫວີຍ** ຄັ້ງວັນທີ 16 / 12 /2024.

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນນານ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໄດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານ ດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 199410 | 2199677 | ຮ້ານຂາຍປາທູ |
| 2 | 199428 | 2199815 | ແຈກຳແພງຂອງໂຮງແຮມວິວຫຼວງພະບາງ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ........................ ຄຳມູນ ພູວິໄລ Khammoon PHOUVILAY　　　ພະຍານ ບ້ານ........................................

2. ນາຍບ້ານ ບ້ານ........................ ຕຸ້ຍ ມູນມະນີ Touy MOUNMANY　　　ພະຍານ ບ້ານ........................................

ເຈົ້ານະຄອນຫຼວງພະບາງ　　　ຫົວໜ້າ ຫ້ອງການພາຍໃນ　　　ຫົວໜ້າ ຫ້ອງການ ຊສ ນະຄອນ

ວຽງທອງ ຫັດສະຈັນ Viengthong HATSACHANH　　　ນ. ແສງທອງ ລາທິພົງ　　　ສຸພານຸສິດ ອາລຸນ Mr Souphanousith AROUNE

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ　　　　　　　　　　　　　　　　　　　　ເລກທີ..21....../

## ບົດບັນທຶກ

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ນາຫຼວງ ແລະ ບ້ານ ຂໍ່ວທີ່1

– ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

– ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.

– ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ **ບ້ານ ນາສຳພັນ ແລະ ບ້ານ ນາສ້າງເຫວີຍ** ຄັ້ງວັນທີ 16 / 12 /2024.

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນນານ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໄດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານ ດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 199293 | 2198934 | ໜ້າ ກາລາລົດ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ.................... ພະຍານ ບ້ານ..........................................

ຄຳມູນ ພູວິໄລ
Khammoon PHOUVILAY

2. ນາຍບ້ານ ບ້ານ.................... ພະຍານ ບ້ານ..........................................

ເຈົ້ານະຄອນຫຼວງພະບາງ　　　　ຫົວໜ້າ ຫ້ອງການພາຍໃນ　　　　ຫົວໜ້າ ຫ້ອງການ ຊສ ນະຄອນ

ວຽງທອງ ຫັດສະຈັນ
Viengthong HATSACHANH

ນ. ແສງທອງ ລາທິພົງ

ສຸພານຸສິດ ອາລຸນ
Mr Souphanousith AROUN

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ ເລກທີ.21...../

# ບົດບັນທຶກ

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ນາຫຼວງ ແລະ ບ້ານ ນາສຳພັນ

– ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

– ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.

– ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ **ບ້ານ ນາສຳພັນ ແລະ ບ້ານ ນາສ້າງເຫວີຍ** ຄັ້ງວັນທີ 16 / 12 /2024.

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນນານ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໄດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານ ດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 200127 | 2199764 | ກ້ອງເຮືອນພັກແກ້ວມີຊົມ |
| 2 | 199769 | 2199796 | ແຈຮ້ານເບສໂຄ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ.......................... ພະຍານ ບ້ານ..........................................

ຄຳມູນ ພູວິໄລ
Khammoon PHOUVILAY

2. ນາຍບ້ານ ບ້ານ.......................... ພະຍານ ບ້ານ..........................................

ໄຊຊົວລືເຮີ ເດີເຈີຊົວ
XAI shoua lue her der chesouavue

ເຈົ້ານະຄອນຫຼວງພະບາງ | ຫົວໜ້າ ຫ້ອງການພາຍໃນ | ຫົວໜ້າ ຫ້ອງການ ຊສ ນະຄອນ

ວຽງທອງ ຫັດສະຈັນ
Viengthong HATSACHANH

ນ. ແສງທອງ ລາທິພົງ

ສຸພານຸສິດ ອາລຸນ
Mr Souphanousith AROUNE

ຕັ້ງປະຕິບັດໂດຍ

ສະໜັບສະໜູນ

ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ

The Intergrated Water Resource Management and Ecosystem-based Adaptation in the Xe Bang Hieng River Basin and Luang Prabang City Project